ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຂ່າວສານ ທຫລ ອວຍພອນສື່ມວນຊົນ



ເພື່ອເປັນການສະແດງຄວາມຮູ້ບຸນຄຸນ ແລະ ທັງເປັນການເພີ່ມຄວາມທະວີຄວາມສາມັກຄີ ກັບອົງການສື່ມວນຊົນລາວ ແລະ ໃນວັນທີ 31 ກໍລະກົດ 2020 ນີ້ ໂດຍໄດ້ຮັບການມອບໝາຍຈາກຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ; ທ່ານ ຣັດສະໝີ ດວງສັດຈະ ບັນນາທິການວາລະສານ-ລາຍການວິທະຍຸທະນາຄານແຫ່ງ ສປປ ລາວ ພ້ອມຄະນະ ໄດ້ເຂົ້າອວຍພອນຄະນະນໍາສະຖານີວິທະຍຸກະຈາຍສຽງແຫ່ງຊາດລາວເນື່ອງໃນວັນສ້າງຕັ້ງສື່ມວນຊົນລາວ ແລະ ການພິມຈໍາໜ່າຍ ຄົບຮອບ 65 ປີ (ວັນທີ 13 ສິງຫາ 1955-ວັນທີ 13 ສິງຫາ 2020) ແລະ ວັນສ້າງຕັ້ງວິທະຍຸກະຈາຍສຽງແຫ່ງຊາດລາວ ຄົບຮອບ 60 ປີ (ວັນທີ 13 ສິງຫາ 1960- ວັນທີ 13 ສິງຫາ 2020).

ໃນໂອກາດດັ່ງກ່າວ, ທ່ານ ຣັດສະໝີ ດວງສັດຈະ ໄດ້ຕາງໜ້າໃຫ້ຄະນະນໍາຫ້ອງການ ກໍ່ຄືຄະນະນັກຂ່າວທະນາຄານແຫ່ງ ສປປ ລາວ ໄດ້ນໍາກະຕ່າຂອງຂວັນພ້ອມດ້ວຍເງິນສົດ 3.500.000 ກີບມອບໃຫ້ແກ່ສະຖານີວິທະຍຸກະຈາຍສຽງແຫ່ງຊາດລາວ ຊຶ່ງຮັບໂດຍແມ່ນທ່ານ ໂພສີ ແກ້ວມະນີວົງ ຄະນະພັກກະຊວງຖະແຫຼງຂ່າວ, ວັດທະນາທໍາ ແລະ ທ່ອງທ່ຽວ, ຜູ້ອໍານວຍການໃຫຍ່ສະຖານີວິທະຍຸກະຈາຍສຽງແຫ່ງຊາດລາວ ແລະ ເງິນຈໍານວນດັ່ງກ່າວແມ່ນເປັນການປະກອບສ່ວນເຂົ້າໃນການຈັດພິມປຶ້ມມູນເຊື້ອ 60 ປີແຫ່ງການກໍາເນີດ ແລະ ເຕີບໃຫຍ່ຂະຫຍາຍຕົວຂອງສະຖານີວິທະຍຸກະຈາຍສຽງແຫ່ງຊາດລາວ.

ຈາກນັ້ນ; ກໍ່ໄດ້ມີການແຂ່ງຂັນກິລາເປຕັງ ຊຶ່ງມີນັກກິລາມາຈາກສໍານັກຂ່າວສື່ສິ່ງພິມ, ສື່ເອເລັກໂຕຼນິກ ແລະ ບັນດາຂະແໜງການ, ໂຄສົກຈາກລາຍການຕ່າງໆ ໄດ້ເຂົ້າຮ່ວມການແຂ່ງຂັນກິລາດັ່ງກ່າວ, ສໍາລັບຄະນະກິລາຈາກທະນາຄານແຫ່ງ ສປປ ລາວ ແມ່ນໄດ້ປະເພດ 3.

## ຄົນລາວ ຮັກເມືອງລາວ ໃຊ້ເງິນກີບລາວ